ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ ........../ຜ-ຟຟລ.
ນະຄອນຫລວງວຽງຈັນ, ວັນທີ......

**<u>ພິທີເປີດໂຕບໍລິສັດ E&E Engineering and Service Company Limited</u>**

ໃນວັນທີ 11 ມັງກອນ 2019, ໄດ້ມີພິທີເປີດໂຕບໍລິສັດ E&E Engineering and Service Company Limited ຢ່າງເປັນທາງການທີ່ ໂຮງແຮມ Lao Plaza. ໂດຍການເປັນຮຸ້ນສ່ວນຂອງສອງບໍລິສັດລະຫວ່າງ ບໍລິສັດ EDL-Gen Operation and Maintenance Service Sole Company Limited (EDL-Gen O&M) ແລະ ບໍລິສັດ EGCO Engineering and Service Company Limited (ESCO), ເຊິ່ງບໍລິສັດ E&E Engineering and Service Company Limited ໄດ້ຮັບການສ້າງຕັ້ງ ແລະ ຈົດທະບຽນຢ່າງຖືກຕ້ອງ ໃນ ສປປ ລາວ ໃນວັນທີ 15 ພະຈິກ 2018. ຈຸດປະສົງຫຼັກຂອງການສ້າງຕັ້ງບໍລິສັດດັ່ງກ່າວແມ່ນ ການໃຫ້ບໍລິການທາງດ້ານ ການຄຸ້ມຄອງການຜະລິດ ແລະ ບໍາລຸງຮັກສາ ໃຫ້ເຂື່ອນໄຟຟ້ານໍ້າເທີນ 1 ທີ່ມີກໍາລັງຕິດຕັ້ງ 650 MW ແລະ ຈະສໍາເລັດໃນປີ 2022. ນອກຈາກນີ້, ກໍຍັງມີການບໍລິການວຽກອື່ນໆອີກທີ່ຫຼາກຫຼາຍ ໃຫ້ແກ່ ເຂື່ອນໄຟຟ້າພະລັງງານນໍ້າ, ບັນດາໂຮງໄຟຟ້າ ແລະ ໂຮງງານອຸດສະຫະກໍາ ໃນປະເທດລາວ ເຊັ່ນ:

- ການສ້ອມແປງຂະໜາດນ້ອຍ ແລະ ໃຫຍ່
- ວຽກທາງດ້ານວິສະວະກໍາ ແລະ ກໍ່ສ້າງ
- ສັນຍາການໃຫ້ບໍລິການສ້ອມແປງ ແບບໄລຍະຍາວ ແລະ,
- ການຝຶກອົບຮົມທາງດ້ານເຕັກນິກ

ໃນພິທີດັ່ງກ່າວໄດ້ໃຫ້ກຽດເຂົ້າຮ່ວມໂດຍ ທ່ານ ປອ ດາວວົງ ພອນແກ້ວ, ຫົວໜ້າຫ້ອງການ, ກະຊວງພະລັງງານ ແລະ ບໍ່ແຮ່, ທ່ານ ເຮືອເອກ ຊັດສະວານ ສາຄອນສິນ, ອຸປະທູດຮັກສາການ ສະຖານເອກອັກຄະຣາຊະທູດໄທ, ປະຈໍາ ສປປ ລາວ , ທ່ານ ນາງ ລັດຕະນາ ປະທຸມວັນ, ຜູ້ອໍານວຍການໃຫຍ່ ຜ-ຟຟລ, ທ່ານ ພູມມີ ເນຕິບັນດິດ, ຜູ້ອໍານວຍການໃຫຍ່ ບໍລິສັດ EDL-Gen O&M, ພ້ອມດ້ວຍບັນດາຄະນະກົມ, ຄະນະສະພາບໍລິຫານ, ຄະນະຜູ້ອໍານວຍການ, ຄະນະຜູ້ບໍລິຫານໃນພາກສ່ວນກ່ຽວຂ້ອງ ແລະ ແຂກທີ່ມີກຽດທຸກໆທ່ານກໍໄດ້ເຂົ້າຮ່ວມເພື່ອເປັນສັກຂີພະຍານໃນງານທີ່ສໍາຄັນຄັ້ງນີ້.



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la